INTERNATIONAL MONETARY FUND

COMMUNICATIONS DEPARTMENT

Press Release No. 19/178
FOR IMMEDIATE RELEASE
May 21, 2019

International Monetary Fund
Washington, D.C. 20431 USA

# ຄະນະປະເມີນ ເສດຖະກິດມະຫາພາກຂອງກອງທຶນການເງິນສາກົນ (IMF) ໄດ້ສຳເລັດການມາເຮັດວຽກ ຢູ່ ສປປ ລາວ

*21 ພຶດສະພາ 2019*

ບົດຖະແຫຼງຂ່າວ ພາຍຫຼັງສິ້ນສຸດການປະເມີນເສດຖະກິດມະຫາພາກປະກອບມີຜົນການປະເມີນເບື້ອງຕົ້ນ ຂອງຄະນະປະເມີນເສດຖະກິດມະຫາພາກ ພາຍຫຼັງທີ່ເດີນທາງມາເຮັດວຽກທີ່ ສປປ ລາວ. ບັນດາທັດສະນະໃນບົດຂ່າວສະບັບນີ້ ເປັນພຽງຄຳເຫັນຂອງທີມງານປະເມີນຜົນ ທີ່ບໍ່ໄດ້ລວມທັດສະນະຂອງສະພາບໍລິຫານຂອງກອງທຶນການເງິນສາກົນ (IMF). ອີງຕາມຜົນການປະເມີນເບື້ອງຕົ້ນ, ຄະນະປະເມີນຜົນຈະໄດ້ຮ່າງບົດລາຍງານ ແລະ ຖ້າໄດ້ຮັບການອະນຸມັດຈາກຄະນະຜູ້ບໍລິຫານ ກໍ່ຈະນຳສະເໜີຕໍ່ສະພາບໍລິຫານຂອງ IMF ເພື່ອປຶກສາຫາລືກັນ ແລະ ພິຈາລະນາຮັບຮອງເອົາບົດລາຍງານດັ່ງກ່າວ.

- ໄພພິບັດທາງທຳມະຊາດເຮັດໃຫ້ ເສດຖະກິດຂອງ ສປປ ລາວ ຂະຫຍາຍຕົວໃນຈັງຫວະທີ່ຊ້າລົງ ແລະ ໄດ້ສະທ້ອນໃຫ້ເຫັນເຖິງຄວາມຈຳເປັນໃນການແກ້ໄຂຄວາມອ່ອນໄຫວຕ່າງໆດ້ານລະບົບໂຄງສ້າງ.
- ການຈັດຕັ້ງປະຕິບັດແຜນງານການປະຕິຮູບແບບຮອບດ້ານ ໂດຍສະເພາະການສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງດ້ານການເງິນຈະສາມາດຫຼຸດຜ່ອນລະດັບໜີ້ສິນພາກລັດໄປຄຽງຄູ່ກັບການເພີ່ມຂີດຄວາມສາມາດດ້ານງົບປະມານ ເພື່ອການພັດທະນາແບບຮອບດ້ານ.
- ການປັບປຸງສະຖິຕິເສດຖະກິດກຳລັງຢູ່ໃນຂັ້ນຕອນຂອງກຸ່ມຈັດຕັ້ງປະຕິບັດ ແລະ ຈຳເປັນໃຫ້ມີການສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອເພີ່ມຄວາມໂປ່ງໃສ ແລະ ໃຫ້ມີຖານຂໍ້ມູນນຳໃຊ້ເຂົ້າການວາງນະໂຍບາຍດ້ານເສດຖະກິດ.

ຄະນະຂອງກອງທຶນການເງິນສາກົນ (IMF) ນຳພາໂດຍ ທ່ານ ນາງ ອີເຕີຣີ ກວິນຕູາດ ໄດ້ມາເຮັດວຽກຢູ່ ສປປ ລາວ ນັບແຕ່ວັນທີ 8-22 ພຶດສະພາ 2019. ໃນລະຫວ່າງການມາເຮັດວຽກຄັ້ງນີ້, ຄະນະຂອງ IMF

ໄດ້ມີການປຶກສາຫາລືຮ່ວມກັບພາກສ່ວນກ່ຽວຂ້ອງຂອງ ສປປ ລາວ ພາຍໃຕ້ຂອບຂອງການປະເມີນເສດຖະກິດມະຫາພາກຕາມມາດຕາ IV ຂອງ IMF ປະຈໍາປີ 2019. ພາຍຫລັງທີ່ສໍາເລັດການປຶກສາຫາລື ທ່ານ ນາງ ອິເຕີຣີ ກວິນຕຼາດ ໄດ້ມີການຖະແຫຼງດັ່ງຕໍ່ໄປນີ້:

“ໃນປີ 2018, ອັດຕາການເຕີບໂຕທາງເສດຖະກິດ ສປປ ລາວ ໄດ້ຫຼຸດລົງມາຢູ່ໃນລະດັບ 6.3% ເນື່ອງຈາກການເກີດໄພພິບັດທໍາມະຊາດ ແລະ ເຫດການສັນເຂື່ອນແຕກ. ພ້ອມນັ້ນ, ອັດຕາເງິນເຟີ້ຍັງຢູ່ໃນລະດັບຕໍ່າ. ໃນຕໍ່ໜ້າ, ເສດຖະກິດຄາດວ່າຈະສືບຕໍ່ຂະຫຍາຍຕົວຢູ່ໃນລະດັບສູງ ເນື່ອງຈາກຈະໄດ້ຮັບການສະໜັບສະໜຸນຈາກການລົງທຶນຂອງພາກເອກະຊົນ, ການສົ່ງອອກພະລັງງານໄຟຟ້າ ແລະ ການສໍາເລັດການກໍ່ສ້າງເສັ້ນທາງລົດໄຟ ຈາກ ຄຸນມິງ ຫາ ວຽງຈັນ. ອັດຕາເງິນເຟີ້ຄາດວ່າຈະຍັງສືບຕໍ່ຢູ່ໃນລະດັບຕໍ່າ ແລະ ບັນຊີຊໍາລະປົກກະຕິຄາດວ່າຈະສືບຕໍ່ຂາດດຸນຍ້ອນຄວາມຕ້ອງການການນໍາເຂົ້າຍັງຈະຢູ່ໃນລະດັບສູງ.

“ຄວາມສ່ຽງຕ່າງໆໃນຕໍ່ໜ້າທີ່ອາດສົ່ງຜົນໃຫ້ການເຕີບໂຕຂອງເສດຖະກິດຫຼຸດລົງສ່ວນໃຫ່ຍແມ່ນຄວາມສ່ຽງຈາກປັດໃຈພາຍນອກ. ໃນສະພາບປະຈຸບັນທີ່ເສດຖະກິດຂອງໂລກກໍາລັງປະເຊີນກັບຄວາມບໍ່ແນ່ນອນ, ການທົດຖອຍຂອງເສດຖະກິດປະເທດຄູ່ຄ້າ ເຊັ່ນ ສປ.ຈີນ ທີ່ເປັນຜູ້ລົງທຶນລາຍໃຫ່ຍທີ່ສຸດ ຂອງ ສປປ ລາວ ອາດເຮັດໃຫ້ອັດຕາການສົ່ງອອກຫຼຸດລົງ ແລະ ເຮັດໃຫ້ການໄຫຼເຂົ້າຂອງການລົງທຶນຈາກຕ່າງປະເທດຫຼຸດລົງ ເຊັ່ນກັນ; ສ່ວນປັດໃຈດ້ານບວກການເຕີບໂຕຢ່າງວ່ອງໄວຂອງເສດຖະກິດພາກພື້ນ ແລະ ການເຊື່ອມໂຍງທີ່ລົງເລິກກວ່າເກົ່າຂອງພາກພື້ນອາຊຽນ ຈະຊ່ວຍກະຕຸ້ນການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ. ພ້ອມນີ້, ການຮີບຮ້ອນຈັດຕັ້ງປະຕິບັດການປະຕິຮູບຈະສາມາດຊ່ວຍຫລຸດຜ່ອນບັນດາຄວາມສ່ຽງເຫຼົ່ານີ້ໄດ້.

“ມາດຕະການຮັດກຸມທາງການເງິນ ໄດ້ເຮັດໃຫ້ການຂາດດຸນງົບປະມານຫຼຸດລົງມາເປັນ 4.4 ເປີເຊັນ ໃນປີ 2018 ຈາກ 5.5 ເປີເຊັນ ໃນປີ 2017 ຍ້ອນງົບປະມານສ່ວນໜຶ່ງຖືກນໍາໃຊ້ເຂົ້າໃນການແກ້ໄຂບັນຫາໄພພິບັດທໍາມະຊາດ ແລະ ການເກັບລາຍຮັບກໍ່ບໍ່ສາມາດບັນລຸໄດ້ຕາມເປົ້າໝາຍ. ໃນຕໍ່ໜ້າ, ລັດຖະບານຈະເອົາໃຈໃສ່ສືບຕໍ່ດໍາເນີນມາດຕະການຮັດກຸມທາງການເງິນຢ່າງຕໍ່ເນື່ອງ ໂດຍການປະຕິຮູບການຄຸ້ມຄອງການເງິນພາກລັດຢ່າງເຕັມສ່ວນ ຊຶ່ງຈະເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການເງິນ. ເພື່ອບັນລຸຄາດໝາຍດັ່ງກ່າວ, ການຈັດຕັ້ງປະຕິບັດຍຸດທະສາດການເກັບລາຍຮັບໄລຍະກາງທີ່ໄດ້ຮັບການກໍານົດ ແລະ ອອກແບບຢ່າງຄົບຖ້ວນ, ການປັບປຸງ ແລະ ຂະຫຍາຍບັນດານິຕິກໍາກ່ຽວກັບອາ

ກອນລາຍຮັບໃຫ້ກ້ວາງ ແລະ ກອມລວມຫຼາຍຂຶ້ນເພື່ອເປັນການເພີ່ມຖານລາຍຮັບ ແລະ ການຫັນການຄຸ້ມຄອງລະບົບອາກອນເປັນທັນສະໄໝແມ່ນບູລິມະສິດໃນການປະຕິຮູບໃນປະຈຸບັນ.

"ສິ່ງສຳຄັນອີກດ້ານໜຶ່ງກໍ່ແມ່ນການກຳນົດບູລິມະສິດທາງດ້ານລາຍຈ່າຍ ໃຫ້ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເພື່ອຊ່ວຍຊຸກຍູ້ການພັດທະນາໃຫ້ທົ່ວເຖິງຫຼາຍຂຶ້ນ ແລະ ເພີ່ມທະວີບັນດາກົນໄກດ້ານງົບປະມານໃຫ້ມີຄວາມໂປ່ງໃສ-ກວດສອບໄດ້. ການເພີ່ມທະວີການປະກອບຂອງແມ່ຍິງໃນຂະແໜງເສດຖະກິດ ແມ່ນມີຄວາມຈຳເປັນໃນການຊຸກຍູ້ໃຫ້ເສດຖະກິດມີການເຕີບໂຕ.

"ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນພາກລັດ (2018) ແມ່ນບາດກ້າວ ໄປສູ່ການກຳນົດ, ກົນໄກ ທີ່ອີງໃສ່ລະບຽບການ ໃນການກູ້ຢືມ ແລະ ຄ້ຳປະກັນການກູ້ຢືມ ໜີ້ສິນພາກລັດ. ການມອບໝາຍພາລະບົດບາດ ໃຫ້ແກ່ກະຊວງການເງິນໃນການຕິດຕາມວຽກງານໜີ້ສິນພາກລັດ ແລະ ການສ້າງຍຸດທະສາດ 5 ປີ ສຳລັບການຄຸ້ມຄອງໜີ້ສິນ ລ້ວນແຕ່ແມ່ນບູລິມະສິດອັນເປັນຕົ້ນຕໍ. ຄວາມມຸ້ງໝັ້ນຂອງລັດຖະບານໃນການປະເມີນ ແລະ ການເລັ່ງເປົ້າໃສ່ບັນດາໂຄງການໂຄງລ່າງພື້ນ ຖານ ທີ່ມີຜົນຕອບແທນທາງດ້ານສັງຄົມສູງ ແລະ ກູ້ຢືມເງິນເພື່ອສະໜອງແກ່ໂຄງການເຫຼົ່ານີ້ໃນອັດຕາທີ່ຜ່ອນຜັນສູງຈະສົ່ງຜົນດີແກ່ຄວາມຍືນຍົງຂອງໜີ້ສິນ.

"ຂອບການຄຸ້ມຄອງຂະແໜງເງິນຕາ ກໍ່ໄດ້ຮັບການຫັນເປັນທັນສະໄໝ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍການສຳລະສະສາງ ແມ່ນຖືກຮັບຮອງ ໃນປີ 2018. ການຈັດຕັ້ງປະຕິບັດຂອບນິຕິກຳໃໝ່ນີ້ ຕ້ອງໄດ້ດຳເນີນຄຽງຄູ່ກັບການສ້າງນິຕິກຳລຸ່ມກົດໝາຍທີ່ຈຳເປັນ, ບັນດາຂໍ້ແນະນຳທີ່ຈະແຈ້ງ ແລະ ຍຸດທະສາດການສື່ສານ ມີຄວາມຫ້າວຫັນກວ່າເກົ່າ.

"ສປປ ລາວ ພວມມີການປັບປຸງວຽກງານສະຖິຕິເສດຖະກິດ ເປັນຕົ້ນ ໃນປີ 2018 ໄດ້ເລີ່ມເຜີຍແຜ່ຂໍ້ມູນທາງການເງິນ ແລະ ປັບປຸງຂອບເວລາໃນການເຜີຍແຜ່ບັນຊີແຫ່ງຊາດໃຫ້ຄົບຖ້ວນ, ທັນເວລາ ແລະ ຕໍ່ເນື່ອງຂຶ້ນເທື່ອລະກ້າວ. ສະນັ້ນ, ການປັບປຸງຕົວຊີ້ວັດໃນຂະແໜງການເງິນ-ເງິນຕາຈຶ່ງມີຄວາມຈຳເປັນ ເພື່ອກ້າວເຂົ້າສູ່ມາດຕະຖານຂອງພາກພື້ນ"

ຄະນະປະເມີນເສດຖະກິດມະຫາພາກ ຂອງ IMF ໄດ້ເຂົ້າຢ້ຽມຄຳນັບ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ທ່ານ ປອ ວິໄລວົງ ບຸດດາຄຳ, ປະທານຄະນະກຳມາທິການ ແຜນການ, ການເງິນ ແລະ ກວດສອບ ຂອງສະພາແຫ່ງຊາດ, ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ອາວຸໂສ ຂອງ ສປປ ລາວ ອີກຫຼາຍທ່ານ. ຄະນະດັ່ງກ່າວ ຍັງໄດ້ມີການປຶກສາຫາລືກັບ ສະຫະພັນແມ່ຍິງລາວ, ບັນດາຄູ່ຮ່ວມພັດທະນາ ແລະຕົວແທນ ຈາກພາກທຸລະກິດ.

ຄະນະປະເມີນເສດຖະກິດມະຫາພາກ ຂອງ IMF ຂໍສະແດງຄວາມຂອບໃຈ ມາຍັງ ລັດຖະບານ ແລະປະຊາຊົນລາວ ໃນການຕ້ອນຮັບຢ່າງອົບອຸ່ນ ແລະ ຂໍອວຍພອນໃຫ້ບັນດາຄວາມພະຍາຍາມທີ່ຈະຜັກດັນການເຕີບໂຕທາງເສດຖະກິດ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ຈົ່ງປະສົບຜົນສຳເລັດ.